**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**


# ຂໍ້ແນະນຳ
# ເຕັກນິກການປູກຜັກກາດຫົວ

ເອກະສານ ປະກອບການຝຶກອົບຮົມ 07:


CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢວກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 07:
# ແນະນໍາເຕັກນິກການປູກຜັກກາດຫົວ

## ສາລະບານ

ຜັກກາດຫົວ (Chinese Radish)....................2
ລັກສະນະທົ່ວໄປ .................... 2
ພັນທີ່ໃຊ້ປູກ ....................3
ການກຽມດິນ....................3
ການປູກ ....................4
ການບົວລະບັດຮັກສາ ....................4
ການເກັບກ່ຽວ ....................6

## ການພວນດິນ ແລະເສຍຫຍ້າ

ພວນດິນໂລ່ງ ແລະຜຸ່ຍດີຊ່ວຍໃຫ້ມີຄວາມສາມາດລະບາຍນ້ຳ ແລະອາກາດດີຂື້ນ ພວນດ້ວຍຄວາມລະມັດລະວັງ. ການກຳຈັດຫຍ້າແມ່ນເຮັດພ້ອມກັບການພວນດິນ. ຖ້າມີຫຍ້າເກີດໃຫ້ຟ້າວຫຼົກອອກຖ້າປ່ອຍໃຫ້ຫຍ້າເກີດຫຼາຍ ຈະເຮັດໃຫ້ຍາກຕໍ່ການກຳຈັດ ແລະສິ່ງຜົນໃຫ້ຜົນຜະລິດຕົກຕ່ຳ.

## ການເກັບກ່ຽວ

ຜັກບົ່ວໃຫຍ່ທີ່ປູກໃນບ້ານເຮົາ ມີອາຍຸການເກັບກ່ຽວຍາວປະມານ 90 ຫາ 100 ວັນ. ຫຼັງຈາກປູກແມ່ນສາມາດເລີ່ມເກັບກ່ຽວໃນເວລາໃບບົ່ວຫົວໃຫຍ່ເລີ່ມຄາຍກາບໃບອອກ ແລະສີຂອງໃບເລີ່ມປ່ຽນເປັນສີເທົາ, ເປືອກຫຸ້ມຫົວຊັ້ນນອກເລີ່ມແຫ້ງເປັນສີນ້ຳຕານ. ຫຼັງຈາກຫຼົກຕົ້ນຂື້ນມາແລ້ວຄວນວາງທັງໃບ ແລະຫົວຕໍ່ງກັນໄປເພື່ອປ້ອງກັນແດດເຜົາ. ໃຫ້ຕາກໄວ້ໃນໜານ 5 ຫາ 7 ວັນ ຈົນໃຫ້ໃບ ແລະ ຕົ້ນແຫ້ງ. ເມື່ອຕາກຜັກບົ່ວຫົວໃຫຍ່ໄດ້ດີແລ້ວໃຫ້ໃຊ້ມີດຕັດຄໍຕົ້ນຫ່າງຈາກຫົວປະມານ 2 ຫາ 3 ຊຕມ. ຈະເຮັດໃຫ້ເກັບຮັກສາໄດ້ດົນ ແລະປ້ອງກັນບໍ່ໃຫ້ພະຍາດເຂົ້າທຳລາຍໄດ້ງ່າຍ.

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

ທັງນີ້ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ໃຫ້ແບ່ງໃສ່ 2 ເທື່ອ: ເທື່ອທີ່ 1 ໃສ່ຕອນປູກແບບຮອງພື້ນແລ້ວພວນປົກລົງໃນດິນ, ເພີ່ມອີກກໍໄດ້ເຊັ່ນ:ຢູເຣຍ ຫຼື ແອມໂມນຽມໄນເຕດຈຳນວນ 60 ກິໂລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕໃນເບື້ອງຕົ້ນ.

## ການໃຫ້ນ້ຳ

ຄວນໃຫ້ນ້ຳຢ່າງສະໝ່ຳສະເໝີ ແລະພຽງພໍທັງເຊົ້າ ແລະແລງ, ຖ້າຜັກກາດຫົວຂາດນ້ຳຈະເຮັດໃຫ້ຂະໜາດ ຂອງຄຸນນະພາບລົດລົງໄປ.

## ການພວນດິນ

ຄວນເຮັດຕອນທີ່ຫຍ້າຍັງມີໜ້ອຍ ແລະຕົ້ນຜັກກາດຫົວຍັງນ້ອຍຢູ່ ນອກຈາກນີ້ຄວນເຮັດດ້ວຍຄວາມລະມັດລະວັງຢ່າໃຫ້ໃກ້ຕົ້ນເກີນໄປເພາະຈະເຮັດໃຫ້ກະທົບກະເທືອນເຖິງຮາກໄດ້.

## ການຄຸມດິນ

ໃຊ້ເຟືອງ ຫຼື ຫຍ້າແຫ້ງປົກບໍລິເວນເຫງົ້າຕົ້ນເພາະຜັກບົ່ວຫົວໃຫຍ່ມີລະບົບຮາກຕື້ນ. ການປົກຈະຊ່ວຍຮັກສາຄວາມຊຸ່ມຂອງໜ້າດິນ ແລະປ້ອງກັນຫຍ້າອີກ.



# ຂໍ້ແນະນຳເຕັກນິກການປູກຜັກກາດຫົວ

## ຜັກກາດຫົວ (Chinese Radish)

ຜັກກາດຫົວ ເປັນພືດຜັກທີ່ເຮົາໃຊ້ປູກເພື່ອບໍລິໂພກພາກສ່ວນຮາກທີ່ຂະຫຍາຍໃຫຍ່ຂື້ນ, ເນື້ອມີສີຂາວ ໃຊ້ປະກອບອາຫານໄດ້ຫຼາຍຢ່າງ ເຊັ່ນ: ປະເພດແກງຈືດ. ຜັກກາດຫົວເປັນພືດທີ່ມີຖິ່ນກຳເນີດ ໃນທະວີບອາຊີປູກຫຼາຍໃນປະເທດຈີນ, ຍີ່ປຸ່ນ ແລະ ໄທ.

## ລັກສະນະທົ່ວໄປ

ຜັກກາດຫົວ ເປັນພືດຜັກຢູ່ໃນຕະກຸນ Cruciferae ມີຊື່ວິທະຍາສາດວ່າ: Raphanus sativus var. longipinnatus Linn. ເປັນພືດຜັກລົ້ມລຸກມີອາຍຸສັ້ນປີດຽວ (Annual) ອາຍຸຕັ້ງແຕ່ຢອດເມັດເຖິງເກັບກ່ຽວປະມານ 42 ຫາ 60 ວັນ, ຮາກຂະຫຍາຍເປັນຫົວສີຂາວຈະເລີນເຕີບໂຕເທິງໜ້າດິນເລັກນ້ອຍ, ສ່ວນທີ່ເຫຼືອຈະເລີນເຕີບໂຕໃນດິນລັກສະນະຂອງຫົວ

ແຕກຕ່າງກັນເຊັ່ນ: ເປັນຮູບຊົງບັ້ງ, ຮູບຊົງກົມ, ຮູບກ້ວຍຍາວ ຫຼື ອື່ນໆ. ທັງໝົດຂຶ້ນຢູ່ ກັບລັກສະນະປະຈຳພັນຂອງແຕ່ລະພັນ. ຜັກກາດຫົວສາມາດ ເຕີບໂຕໃນດິນເກືອບທຸກໆຊະນິດແຕ່ມັກດິນທ່າງປົນຊາຍປະຕິກິຣິຍາຂອງດິນ (pH) 5.8 ຫາ 6.8 ຫຼື ເປັນກົດເລັກນ້ອຍ, ມີຄວາມຊຸ່ມໃນດິນສູງພໍສົມຄວນ. ບ້ານເຮົາສາມາດປູກໄດ້ຕະຫຼອດປີ ແຕ່ຊ່ວງເວລາເໝາະສົມ ຄື ຊ່ວງເວລາທີ່ມີອຸ່ນຫະ ພູມ ປະມານ 15 ຫາ 25°C ຫຼື ລະຫວ່າງເດືອນ ຕຸລາ ຫາ ເດືອນມັງກອນ

## ພັນທີ່ໃຊ້ປູກ

ພັນທີ່ນິຍົມປູກໃນບ້ານເຮົາ ສ່ວນຫຼາຍເປັນພັນດໍເຊັ່ນພັນ: ເຄຢູ 1 ແລະພັນອື່ນໆ.

## ການຕຽມດິນ

ເນື່ອງຈາກຜັກກາດຫົວ ເປັນພືດທີ່ມີລະບົບຮາກເລິກຄວນຂຸດໄຖດິນເລິກ ປະມານ 30 ຊຕມ. ຕາກດິນໄວ້ 7 ຫາ 10 ວັນ ແລ້ວໃສ່ດ້ວຍຝຸ່ນຄອກ ຫຼືຝຸ່ນບົ່ມຄືນເຂົ້າກັນໃຫ້ທົ່ວພວນດິນ ໃຫ້ລະອຽດເກັບຫຍ້າ ແລະເສດໄມ້ອື່ນໆ ອອກຍົກໜ້າດິນຂຶ້ນໃຫ້ເປັນໜານໆ.



## ການປູກ

ໄລຍະປູກທີ່ເໝາະສົມລະຫວ່າງຂຸມຫ່າງກັນປະມານ 25 ຊຕມ. ແລະລະຫວ່າງແຖວ 30 ຊຕມ. ຫຼັງຈາກຕຽມດິນແລ້ວໃຫ້ເຮັດຂຸມນ້ອຍໆ ແລ້ວຢອດເມັດໃນຂຸມໆລະ 3 ຫາ 5 ເມັດ ປົກດິນໜ້າ ປະມານ 0.5 ຊຕມ. ຫົດນ້ຳໃຫ້ຊຸ່ມແລ້ວປົກດວ້ຍເຟືອງແຫ້ງ ຫຼືຫຍ້າແຫ້ງ ເພື່ອຮັກສາຄວາມຊຸ່ມຊື່ນ ຂອງດິນໃນເບື້ອງຕົ້ນ ຫຼັງຈາກເບ້ຍງອກປະມານ 15 ວັນ ຫຼືມີໃບແທ້ 2 ຫາ 3 ໃບ ຄວນຖອນແຍກໃຫ້ ເຫຼືອຂຸມລະ 2 ຕົ້ນ.

## ການບົວລະບັດຮັກສາ

### ການໃສ່ຝຸ່ນ

ຝຸ່ນທີ່ແນະນຳໃຫ້ໃສ່ ຄືຝຸ່ນເຄມີ ສູດ 15_15_15 ຫຼື 13_13_21 ຫຼື ສູດອື່ນໆ ທີ່ໃກ້ຄຽງກັນນີ້. ໃສ່ອັດຕາ 300 ຫາ 600 ກລ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ການໃສ່ຝຸ່ນເທື່ອທີ່ 1 ໃສ່ເປັນ ຝຸ່ນຮອງພື້ນກ່ອນປູກ, ເທື່ອທີ 2 ໃສ່ຫຼັງ ຈາກປູກໄດ້ 30 ຫາ 40 ວັນ ໂຮຍຂ້າງຫ່າງຈາກ ຕົ້ນເລັກນ້ອຍພວນດິນປົກຫຼັງຈາກປູກ ໂດຍໃສ່ແບບໂຮຍຂ້າງຕົ້ນກ່ອນ ແລ້ວພວນດິນປົກ. ນອກຈາກນີ້ຍັງໃສ່ຝຸ່ນເພີ່ມ ອື່ນໆ ເຊັ່ນ: ຝຸ່ນແອມໂມນຽມຊຸນເຟດ ຫຼື ຢູເຣຍ ໃນຊ່ວງການຈະເລີນເຕີບໂຕ. ເທື່ອ ທີ່ 2 ໃສ່ຕອນພືດມີອາຍຸປະ ມານ 20 ຫາ 85 ວັນ ໂດຍໃສ່ແບບໂຮຍຂ້າງຕົ້ນ ແລ້ວພວນດິນປົກ. ນອກຈາກນີ້ໄລຍະທຳອິດຂອງການຈະເລີນເຕີບໂຕອາດຈະໃສ່ຝຸ່ນ ທີ່ແນະນຳໃສ່ສູດ 13_13_21 ຫຼື 15_15_15 ໃນອັດຕາ 300 ຫາ 600 ກິໂລ/ເຮັກຕາ